

ທ່ານອາສັຍຢູ່ໃນໂຮງພະຍາບານ,ສະຖານທີ່ດູແລຜູ້ເຖົ້າຫລືຄົນບໍ່ແຂງແຮງຫລືສູນກາງຝຶກແອບຕາມເຮືອນແລະຢາກຈະໄດ້ຮັບຄວາມຊ່ວຍເຫລືອໃນການຍ້າຍຄືນເຂົ້າສູ່ຊຸມຊົນບໍ່?

ຄວາມສົນໃຈຂອງທ່ານໃນໂຄງການ

**Roads to Community Living**

ແມ່ນສຳຄັນຕໍ່ພວກເຮົາ.

ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບໂຄງ ການ ອັນນີ້ຫລືໂຄງການພັນປ່ຽນຕໍ່ມາອື່ນໆ,ແວ່ປີ່ຽມ

ເພື່ອລາຍລະອຽດກ່ຽວກັບໂຄງການ Aging and Long-Term Support Administration Roads to Community Living, ແວ່ປີ່ຽມ
www.dshs.wa.gov/altsa/rcl

ເພື່ອລາຍລະອຽດກ່ຽວກັບໂຄງການ
Developmental Disabilities Administration Roads to Community Living, ແວ່ປີ່ຽມ
www.dshs.wa.gov/dda/rcl

DSHS
WASHINGTON STATE
Department of Social and Health Services

DSHS 22-1297X LA (Rev. 2/25) Laotian



# Roads to Community Living

ການຊ່ວຍເຫລືອບຸກຄົນໃຫ້ກັບຄືນມາສູ່ ຊຸມຊົນຂອງເຂົາເຈົ້າແລະປະສົບຄວາມສຳເຣັດ

DSHS
WASHINGTON STATE
Department of Social and Health Services



# ການກັບຄືນມາສູ່ຊຸມຊົນຂອງທ່ານ



## Roads to Community Living ແມ່ນຫຍັງ?

*Roads to Community Living* ແມ່ນພາກສ່ວນນຶ່ງຂອງໂຄງການແຫ່ງຊາດຊຶ່ງຖືກເອີ້ນວ່າ *Money Follows the Person*.

ຜ່ານໂຄງການອັນນີ້,ຣັດວໍຊິງຕັນກຳລັງ ຄົ້ນຄ້ວາເບິ່ງວ່າການບໍຣິການແລະການ ອູ້ມຊູແນວໃດແດ່ທີ່ຈະຊ່ວຍບຸກຄົນທີ່ມີຄວາມຕ້ອງການເບິ່ງແຍງດູແລຣະຍະ ຍາວ,ຫຍຸ້ງຍາກສັບສົນຍ້າຍອອກໄປຢ່າງ ເປັນຜົນສຳເຣັດຈາກສະຖານທີ່ປິ່ນປົວເຊັ່ນວ່າໂຮງພະຍາບານແລະສະຖານ ທີ່ດູແລຜູ້ເຖົ້າຫລືຄົນບໍ່ແຂງແຮງກັບຄືນ ເຂົ້າສູ່ຊຸມຊົນ.ສິ່ງເຫລົ່ານີ້ອາດຈະເປັນການໃຊ້ຈ່າຍຫລືການບໍຣິການປິ່ນປົວ ເທື່ອດຽວເທົ່ານັ້ນທີ່ຕ້ອງການໃນຣະຫວ່າງການຍ້າຍຂອງທ່ານຫລືການປ່ຽນ ຄືນເຂົ້າສູ່ຊຸມຊົນ.

ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບແລະຢາກຈະເຂົ້າຮ່ວມໃນໂຄງການ,ທ່ານຈະ:

- ໄດ້ຮັບຄວາມຊ່ວຍເຫລືອນຶ່ງຕໍ່ນຶ່ງສ່ວນຕົວເພື່ອຈະເຣັດແຜນການຜັນປ່ຽນຕໍ່ມາອອກ ມາພ້ອມດ້ວຍການບໍຣິການແລະການອູ້ມຊູທີ່ທ່ານຕ້ອງການເພື່ອຈະຍ້າຍຄືນເຂົ້າສູ່ ຊຸມຊົນ.
- ມີການເຂົ້າເຖິງການບໍຣິການແລະການອູ້ມຊູເພີ້ມເຕີມທີ່ບໍ່ມີໄວ້ໃຫ້ໃນປັດຈຸບັນຜ່ານໂຄງການທີ່ມີຢູ່ດຽວນີ້.





## ແມ່ນໃຜແດ່ສາມາດເຂົ້າຮ່ວມໃນໂຄງການ?

*Roads to Community Living* ແມ່ນສຳລັບທຸກໆຄົນ:

- ອາສັຍຢູ່ໃນໂຮງພະຍາບານ,ສະຖານ ທີ່ດູແລຜູ້ເຖົ້າຫລືຄົນບໍ່ແຂງແຮງຫລືສູນກາງຝຶກແອບຕາມເຮືອນເປັນເວລາສອງ ເດືອນຫລືດົນນານກວ່າ.
- ກຳລັງໄດ້ຮັບ Medicaid ເພື່ອຈະຈ່າຍສຳລັບການປິ່ນປົວ.



"ມັນໃຊ້ເວລາຫົກເດືອນແລະວຽກຍາກຫລາຍ.ດ້ວຍການອູ້ມຊູຈາກຄະນະທີມງານໄໂາດຊທໂCommunity Living, ຂ້ອຍກັບຄືນມາຢູ່ເຮືອນແລ້ວ!"

## ການບໍຣິການແລະການອູ້ມຊູແນວໃດແດ່ທີ່ອາດຈະມີໄວ້ໃຫ້?

- ການກຳກັບເບິ່ງນຳສຳນວນແລະການວາງແຜນຜັນປ່ຽນຕໍ່ມາ.
- ຊ່ວຍເຫລືອທ່ານຊອກຫາບ່ອນຢູ່ອາສັຍທີ່ສາມາດຈ່າຍໄດ້
- ຊ່ວຍເຫລືອທ່ານນຳເຄື່ອງນຸ່ງຈຳເປັນແລະສິ່ງຂອງເຮືອນຊານເພື່ອຈະຈັດແຈງເຮືອນຂອງທ່ານ.



- ການຝຶກຝົນຄວາມຊຳນານໃນຊີວິດຫລືການບໍຣິການປຶກສາເພື່ອຈະຊ່ວຍເຫລືອຕຽມພ້ອມທ່ານໃຫ້ອາສັຍຢູ່ໃນຊຸມຊົນໃຫມ່ອີກ.
- ການຝຶກຝົນເຣື່ອງຄວາມຊຳນານໃນການ ແກ້ໄຂບັນຫາແລະການອູ້ມຊູການປະພຶດ.
- ເຄື່ອງຊ່ວຍເຫລືອແລະການບໍຣິການອູ້ມ ຊູເພື່ອຈະໃຊ້ສິ່ງເຫລົ່ານີ້.
- ຣະບົບຕອບຕໍ່ເຫດການສຸກເສີນສ່ວນຕົວ.
- ການຝຶກຝົນ,ການສຶກສາ,ຫລືການອູ້ມຊູສຳລັບຄອບຄົວແລະຜູ້ເບິ່ງແຍງດູແລຄົນອື່ນ.
- ການດັດແປງຮູບຮ່າງເຮືອນຫລືການສ້ອມແປງເລັກນ້ອຍເພື່ອຈະອູ້ມຊູທ່ານອາສັຍຢູ່ໃນເຮືອນຂອງທ່ານຢ່າງປອດພັຍ. ຕົວຢ່າງລວມເອົາທາງຍ່າງຂຶ້ນແລະຣາວມືຈັບຍ່າງ.
- ການປັບໃຫ້ເຂົ້າສະພາບໃນຣົດຍົນເຊັ່ນວ່າເຄື່ອງຍົກລໍ້ຊຸກຫລືເຄື່ອງຄວບຄຸມດ້ວຍມື.
- ການຂົນສິ່ງໄປມາທີ່ບໍ່ແມ່ນທາງການແພດ.